**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມການຄ້າພາຍໃນ

ເລກທີ 0958/ກຄພນ

ນະຄອນຫຼວງວຽງຈັນ, ວັນທີ 28 ສິງຫາ 2024

# ແຈ້ງການ

**ເຖິງ:** - ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ.

- ສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກ໊ດ ລາວ, ບັນດາບໍລິສັດນ້ຳມັນເຊື້ອໄຟ ແລະ ປ້ຳຂາຍຍ່ອຍນ້ຳມັນເຊື້ອໄຟ.

**ເລື່ອງ:** ປັບລົງລາຄານ້ຳມັນເຊື້ອໄຟໃນຂອບເຂດທົ່ວປະເທດ.

- ອີງຕາມ ດຳລັດວ່າດ້ວຍ ກອງທຶນນ້ຳມັນເຊື້ອໄຟສະບັບເລກທີ 83/ລບ, ລົງວັນທີ 16 ມັງກອນ 2024.
- ອີງຕາມ ທິດຊີ້ນຳຂອງຄະນະນຳກະຊວງອຸດສາຫະກຳ ແລະ ການຄ້າ ຄັ້ງວັນທີ 28 ສິງຫາ 2024.
- ອີງຕາມ ສະພາບການເໜັງຕີງຂຶ້ນ-ລົງລາຄານ້ຳມັນເຊື້ອໄຟ ໃນຕະຫຼາດໂລກ ແລະ ໃນຂົງເຂດ.

ເພື່ອເຮັດໃຫ້ການປັບລາຄານ້ຳມັນເຊື້ອໄຟ ພາຍໃນປະເທດ ຂຶ້ນ-ລົງ ຕາມການເໜັງຕີງຂອງຕະຫຼາດໂລກ ທັງນີ້ ກໍເພື່ອຮັບປະກັນການສະໜອງນ້ຳມັນເຊື້ອໄຟ ໃຫ້ເປັນປົກກະຕິ.

**ກົມການຄ້າພາຍໃນ, ກະຊວງອຸດສາຫະກຳ ແລະ ການຄ້າ ຈຶ່ງໄດ້ອອກແຈ້ງການ ເຖິງທ່ານຊາບ ແລະ ປະຕິບັດດັ່ງນີ້:**

1. ປັບລົງລາຄານ້ຳມັນເຊື້ອໄຟທຸກຊະນິດ ຄື: ນ້ຳມັນແອັດຊັງພິເສດ ປັບລົງ 230 ກີບ/ລິດ, ນ້ຳມັນແອັດຊັງທຳມະດາ ປັບລົງ 60 ກີບ/ລິດ ແລະ ນ້ຳມັນກາຊວນ ປັບລົງ 270 ກີບ/ລິດ.

ລາຄາຕາມຕາຕະລາງລຸ່ມນີ້ ແມ່ນລາຄາຈຸດນະຄອນຫຼວງວຽງຈັນ: ຫົວໜ່ວຍ:ກີບ.

| ລ/ດ | ຊະນິດ | ລາຄາຂາຍຍ່ອຍ | | ເພີ່ມ/ຫຼຸດ | | ໝາຍເຫດ |
|---|---|---|---|---|---|---|
| | | ຫຼ້າສຸດ | ໃໝ່ | | | |
| | | ກີບ | ກີບ | ກີບ | % | |
| 1 | ອຊ ພິເສດ | 30,780 | 30,550 | (230) | 0,75 | |
| 2 | ອຊ ທຳມະດາ | 23,990 | 23,930 | (60) | 0,25 | |
| 3 | ກາຊວນ | 20,410 | 20,140 | (270) | 1,32 | |

(ສຳລັບລາຄາຂາຍຍ່ອຍເຂດເທດສະບານແຂວງ ແມ່ນມີເອກະສານຊ້ອນທ້າຍ).

2. ລາຄາໃໝ່ນີ້ແມ່ນໃຫ້ເລີ່ມປະຕິບັດວັນທີ 29 ສິງຫາ 2024, ເວລາ 06:00ໂມງໃນຂອບເຂດທົ່ວປະເທດ.
3. ການຄິດໄລ່ພັນທະ ແລະ ຄ່າທຳນຽມຕ່າງໆ ແມ່ນໃຫ້ພາກສ່ວນກ່ຽວຂ້ອງ ຄິດໄລ່ເກັບຕາມທີ່ໄດ້ກຳນົດໄວ້ ໃນໂຄງປະກອບລາຄານ້ຳມັນເຊື້ອໄຟ ສະບັບເລກທີ 0957/ກຄພນ, ລົງວັນທີ 28 ສິງຫາ 2024 ຈົນກວ່າຈະມີການປ່ຽນແປງ.

4. ໃຫ້ບັນດາບໍລິສັດນ້ຳມັນເຊື້ອໄຟ ປະຕິບັດຕາມເນື້ອໃນຂ້າງເທິງນີ້ຢ່າງເຂັ້ມງວດ ແລະ ຄຸ້ມຄອງປ້ຳຂາຍຍ່ອຍຂອງຕົນ ໃຫ້ບໍລິການຢ່າງເປັນປົກກະຕິ.
5. ໃຫ້ພະແນກ ອຄ ແຂວງ, ນະຄອນຫຼວງວຽງຈັນ ຊີ້ນຳຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ນະຄອນ ລົງຕິດຕາມ, ກວດກາການຈັດຕັ້ງປະຕິບັດລາຄາໃໝ່ນີ້ຂອງປ້ຳນ້ຳມັນເຊື້ອໄຟໃນຂອບເຂດຄວາມຮັບຜິດຊອບຂອງຕົນ ເປັນປົກກະຕິ, ຫາກພົບເຫັນ ປ້ຳໃດບໍ່ປະຕິບັດຕາມລາຄາໃໝ່ນີ້ ໃຫ້ນຳໃຊ້ມາດຕະການຕ່າງໆ ຕາມລະບຽບການໃນຂອບເຂດຄວາມຮັບຜິດຊອບຂອງຕົນ.
6. ແຈ້ງການສະບັບນີ້ ປ່ຽນແທນແຈ້ງການ ສະບັບເລກທີ 0934/ກຄພນ, ລົງວັນທີ 21 ສິງຫາ 2024.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດ.

ຫົວໜ້າກົມ

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມການຄ້າພາຍໃນ

ສັນຕິສຸກ ພູນສະຫວັດ

<u>ບ່ອນສົ່ງ:</u>

- ຫ້ອງວ່າການສູນກາງພັກ (ໃຊ້ຕາງລາຍງານ).
- ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ (ໃຊ້ຕາງລາຍງານ).
- ຫ້ອງການ ກະຊວງການເງິນ (ເພື່ອຊາບ).
- ທ່ານຜູ້ວ່າການທະນາຄານແຫ່ງ ສປປ ລາວ (ເພື່ອຊາບ).
- ກົມພາສີ ແລະ ກົມສ່ວຍສາອາກອນ ກະຊວງການເງິນ (ເພື່ອເປັນບ່ອນອີງ).
- ກົມຂົນສົ່ງ, ກະຊວງ ໂຍທາທິການ ແລະຂົນສົ່ງ (ເພື່ອຊາບ).
- ຄະນະກຳມະການຄຸ້ມຄອງຕະຫຼາດຫຼັກຊັບ (ເພື່ອຊາບ).
- ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ (ເພື່ອຕິດຕາມ).

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມການຄ້າພາຍໃນ

ລາຄາຂາຍຍ່ອຍໜ້າປ້ຳນ້ຳມັນເຊື້ອໄຟ ໃໝ່ ໃນເຂດເທດສະບານແຂວງ, ນະຄອນຫຼວງວຽງຈັນ ເລີ່ມປະຕິບັດ ວັນທີ 29 ສິງຫາ 2024, ເວລາ 06:00 ໂມງ ໃນຂອບເຂດທົ່ວປະເທດ:

ຫົວໜ່ວຍ: ກີບ/ລິດ.

| ລ/ດ | ຈຸດ | ແອັດຊັງພິເສດ | ແອັດຊັງທຳມະດາ | ກາຊວນ |
|---|---|---|---|---|
| 1 | ນະຄອນຫຼວງວຽງຈັນ | **30,550** | **23,930** | **20,140** |
| 2 | ແຂວງຜົ້ງສາລີ | **31,540** | **24,920** | **21,130** |
| 3 | ແຂວງຫຼວງນ້ຳທາ | **31,040** | **24,430** | **20,630** |
| 4 | ແຂວງອຸດົມໄຊ | **31,220** | **24,600** | **20,810** |
| 5 | ແຂວງບໍ່ແກ້ວ | **30,650** | **24,030** | **20,240** |
| 6 | ແຂວງຫຼວງພະບາງ | **31,060** | **24,440** | **20,650** |
| 7 | ແຂວງໄຊຍະບູລີ | **30,870** | **24,260** | **20,470** |
| 8 | ແຂວງຫົວພັນ | **31,040** | **24,440** | **20,650** |
| 9 | ແຂວງຊຽງຂວາງ | **30,740** | **24,120** | **20,330** |
| 10 | ແຂວງວຽງຈັນ | **30,550** | **23,930** | **20,140** |
| 11 | ແຂວງບໍລິຄຳໄຊ | **30,600** | **23,980** | **20,190** |
| 12 | ແຂວງຄຳມ່ວນ | **30,580** | **23,960** | **20,170** |
| 13 | ແຂວງສະຫວັນນະເຂດ | **30,580** | **23,960** | **20,170** |
| 14 | ແຂວງສາລະວັນ | **30,830** | **24,220** | **20,430** |
| 15 | ແຂວງຈຳປາສັກ | **30,610** | **23,990** | **20,200** |
| 16 | ແຂວງເຊກອງ | **30,830** | **24,220** | **20,430** |
| 17 | ແຂວງອັດຕະປື | **30,880** | **24,260** | **20,470** |
| 18 | ແຂວງໄຊສົມບູນ | **30,970** | **24,350** | **20,570** |

ນະຄອນຫຼວງວຽງຈັນ, ວັນທີ 28 ສິງຫາ 2024

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມການຄ້າພາຍໃນ